ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ ເລກທີ 370/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 26 ມີນາ 2024

# ຂໍ້ຕົກລົງ
# ວ່າດ້ວຍການບໍລິຫານຄວາມສ່ຽງດ້ານສະພາບຄ່ອງຂອງທະນາຄານທຸລະກິດ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມ ກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ສະບັບເລກທີ 39/ສພຊ, ລົງວັນທີ 17 ກໍລະກົດ 2023;
- ອີງຕາມ ການຄົ້ນຄວ້າຂອງກົມຄຸ້ມຄອງທະນາຄານທຸລະກິດ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບການບໍລິຫານຄວາມສ່ຽງດ້ານສະພາບຄ່ອງຂອງທະນາຄານທຸລະກິດ ເພື່ອຮັບປະກັນໃຫ້ທະນາຄານທຸລະກິດ ມີສະພາບຄ່ອງພຽງພໍກັບພາລະໜີ້ສິນຂອງຕົນ ແນໃສ່ເຮັດໃຫ້ທະນາຄານທຸລະກິດ ມີຄວາມໝັ້ນຄົງ ແລະ ຮັບປະກັນການຊຳລະສະສາງ ໃນລະບົບເສດຖະກິດໃຫ້ມີຄວາມຄ່ອງຕົວ.

**ມາດຕາ 2 ການບໍລິຫານຄວາມສ່ຽງດ້ານສະພາບຄ່ອງຂອງທະນາຄານທຸລະກິດ**

ການບໍລິຫານຄວາມສ່ຽງດ້ານສະພາບຄ່ອງຂອງທະນາຄານທຸລະກິດ ແມ່ນ ການປະຕິບັດລະບຽບ, ກົນໄກ ແລະ ຂັ້ນຕອນ ການບໍລິຫານຄວາມສ່ຽງຂອງທະນາຄານທຸລະກິດ ເພື່ອຮັກສາສະພາບຄ່ອງຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ທະນາຄານທຸລະກິດ** ໝາຍເຖິງ ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ທີ່ສ້າງຕັ້ງ ແລະ ດຳເນີນທຸລະກິດ ຢ່າງຖືກຕ້ອງຕາມກົດໝາຍຂອງ ສປປ ລາວ;

2. **ສະພາບໍລິຫານ** ໝາຍເຖິງ ສະພາບໍລິຫານຂອງທະນາຄານທຸລະກິດ ຫຼື ພາກສ່ວນທີ່ມີສິດອຳນາດໃນສຳນັກງານໃຫຍ່ ຂອງສາຂາທະນາຄານທຸລະກິດຕ່າງປະເທດ ຊຶ່ງເຄື່ອນໄຫວຄ້າຍຄືກັບສະພາບໍລິຫານ ຂອງທະນາຄານທຸລະກິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທະນາຄານທຸລະກິດ;

3. **ສະພາບຄ່ອງ** ໝາຍເຖິງ ຄວາມສາມາດໃນການມີຊັບສິນ ເພື່ອຮອງຮັບການຊຳລະໜີ້ ເມື່ອເຖິງກຳນົດເວລາ;

4. **ຄວາມສ່ຽງດ້ານສະພາບຄ່ອງ** ໝາຍເຖິງ ຄວາມເປັນໄປໄດ້ທີ່ທະນາຄານທຸລະກິດ ຈະຂາດຊັບສິນ ຊຶ່ງຈະເຮັດໃຫ້ບໍ່ສາມາດຊຳລະໜີ້ ເມື່ອເຖິງກຳນົດເວລາ;

5. **ຄວາມສາມາດໃນການຮັບຄວາມສ່ຽງ (Risk Tolerance)** ໝາຍເຖິງ ລະດັບຄວາມສ່ຽງດ້ານສະພາບຄ່ອງ ທີ່ທະນາຄານທຸລະກິດ ສາມາດຮັບມືໄດ້;

6. **ການທົດສອບພາວະເຄັ່ງຕຶງ (Stress Testing)** ໝາຍເຖິງ ການທົດສອບສົມມຸດຖານພາວະວິກິດທີ່ອາດຈະເກີດຂຶ້ນຈິງ ເພື່ອປະເມີນຄວາມສາມາດດ້ານສະພາບຄ່ອງຂອງທະນາຄານທຸລະກິດ ໃນການຮັບມືກັບພາວະວິກິດດັ່ງກ່າວ;

7. **ລະບົບແຈ້ງເຕືອນແຕ່ຫົວທີ (Early Warning System)** ໝາຍເຖິງ ບັນດາຕົວຊີ້ວັດທີ່ໃຊ້ວັດແທກຄວາມສ່ຽງດ້ານສະພາບຄ່ອງແຕ່ຫົວທີ;

8. **ສະກຸນເງິນທີ່ສຳຄັນ** ໝາຍເຖິງ ສະກຸນເງິນທີ່ກວມເອົາແຕ່ ຫ້າສ່ວນຮ້ອຍ (5%) ຂຶ້ນໄປ ຂອງຊັບສິນທັງໝົດ ຂອງທະນາຄານທຸລະກິດ.

**ມາດຕາ 4 ຫຼັກການການບໍລິຫານຄວາມສ່ຽງດ້ານສະພາບຄ່ອງຂອງທະນາຄານທຸລະກິດ**

ການບໍລິຫານຄວາມສ່ຽງດ້ານສະພາບຄ່ອງຂອງທະນາຄານທຸລະກິດ ຕ້ອງປະຕິບັດຕາມຫຼັກການພື້ນຖານດັ່ງນີ້:

1. ສອດຄ່ອງກັບກົດໝາຍ, ແຜນຍຸດທະສາດ ແລະ ລະບົບການບໍລິຫານຄວາມສ່ຽງດ້ານສະພາບຄ່ອງ;

2. ມີລະບົບບໍລິຫານຄວາມສ່ຽງ ຮັດກຸມ ແລະ ແທດເໝາະກັບສະພາບຄວາມສ່ຽງ ໃນແຕ່ລະໄລຍະ;

3. ໄດ້ຮັບການຊີ້ນຳຈາກສະພາບໍລິຫານ ໃນການທົບທວນ ແລະ ທົດສອບ ການບໍລິຫານຄວາມສ່ຽງດ້ານສະພາບຄ່ອງ ຢ່າງເປັນປະຈຳ;

4. ຮັບປະກັນໃຫ້ມີຊັບສິນສະພາບຄ່ອງພຽງພໍສຳລັບຮອງຮັບໜີ້ສິນ ໃນສະພາບປົກກະຕິ ແລະ ພາວະວິກິດ;

5. ຮັບປະກັນການກວດພົບຄວາມສ່ຽງດ້ານສະພາບຄ່ອງ ແຕ່ຫົວທີ ແລະ ແກ້ໄຂຢ່າງທັນການ;

6. ຮັບປະກັນຄວາມໝັ້ນຄົງ, ປົກປ້ອງຜົນປະໂຫຍດຂອງຜູ້ຝາກເງິນ ແລະ ປ້ອງກັນຄວາມເສຍຫາຍທີ່ອາດຈະເກີດຂຶ້ນຕໍ່ລະບົບສະຖາບັນການເງິນ.

ມາດຕາ 5 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບ ກຸ່ມຄຸ້ມຄອງທະນາຄານທຸລະກິດ, ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ທີ່ເຄື່ອນໄຫວຢູ່ ສປປ ລາວ.

## ໝວດທີ 2

## ກອບການບໍລິຫານຄວາມສ່ຽງດ້ານສະພາບຄ່ອງ

ມາດຕາ 6 ກອບການບໍລິຫານຄວາມສ່ຽງດ້ານສະພາບຄ່ອງ

ກອບການບໍລິຫານຄວາມສ່ຽງດ້ານສະພາບຄ່ອງ (Liquidity Risk Management Framework) ແມ່ນ ລະບົບການບໍລິຫານຄວາມສ່ຽງດ້ານສະພາບຄ່ອງ ຊຶ່ງປະກອບດ້ວຍ ກົງຈັກການບໍລິຫານຄວາມສ່ຽງ, ຂະບວນການບໍລິຫານຄວາມສ່ຽງ, ການກຳນົດຄວາມສາມາດໃນການຮັບຄວາມສ່ຽງ, ການວາງແຜນດຳເນີນທຸລະກິດ, ການຕິດຕາມ ແລະ ຄວບຄຸມຄວາມສ່ຽງທົ່ວກຸ່ມ, ຍຸດທະສາດແຫຼ່ງທຶນແບບຫຼາກຫຼາຍ, ການບໍລິຫານຖານະສະພາບຄ່ອງພາຍໃນວັນ, ການບໍລິຫານຫຼັກຊັບຄ້ຳປະກັນ, ການທົດສອບພາວະເຄັ່ງຕຶງ, ການກຳນົດແຜນການສະໜອງທຶນສຸກເສີນ, ການຮັກສາຊັບສິນສະພາບຄ່ອງ, ການເປີດເຜີຍຂໍ້ມູນ ແລະ ຄູ່ມືບໍລິຫານຄວາມສ່ຽງດ້ານສະພາບຄ່ອງ.

ທະນາຄານທຸລະກິດ ຕ້ອງສ້າງກອບການບໍລິຫານຄວາມສ່ຽງດ້ານສະພາບຄ່ອງທີ່ຮັດກຸມ ພາຍໃຕ້ການຊີ້ນຳ-ນຳພາຂອງສະພາບໍລິຫານ ເພື່ອຮັບປະກັນໃຫ້ທະນາຄານທຸລະກິດມີສະພາບຄ່ອງພຽງພໍ ແລະ ຮອງຮັບພັນທະໜີ້ສິນຂອງຕົນ ໃນສະພາບຕ່າງໆ ໂດຍຄຳນຶງເຖິງສະພາບຄວາມສ່ຽງ, ຄວາມສາມາດຮັບມືກັບສະພາບຄວາມສ່ຽງ, ສະພາບຕະຫຼາດ ແລະ ເສດຖະກິດມະຫາພາກ.

ມາດຕາ 7 ກົງຈັກການບໍລິຫານຄວາມສ່ຽງດ້ານສະພາບຄ່ອງ

ທະນາຄານທຸລະກິດ ຕ້ອງມີກົງຈັກການບໍລິຫານຄວາມສ່ຽງດ້ານສະພາບຄ່ອງ ທີ່ກຳນົດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງແຕ່ລະຂັ້ນຢ່າງຈະແຈ້ງ ແລະ ເປັນລະບົບ ໂດຍແມ່ນສະພາບໍລິຫານ ເປັນຜູ້ຊີ້ນຳລວມ ດ້ວຍການຮັບຮອງເອົາຍຸດທະສາດ, ນະໂຍບາຍ, ແຜນການ ແລະ ຄູ່ມື. ພ້ອມທັງ ມີລະບົບການຕິດຕາມ ກວດກາ ແລະ ທົບທວນຄືນ ຢ່າງໜ້ອຍປີລະຄັ້ງ.

ກົງຈັກການບໍລິຫານຄວາມສ່ຽງດ້ານສະພາບຄ່ອງ ປະກອບມີ ສາມ (3) ຂັ້ນ ດັ່ງນີ້:

1. ຂັ້ນໜຶ່ງ: ພາກສ່ວນດຳເນີນທຸລະກິດ;
2. ຂັ້ນສອງ: ພາກສ່ວນບໍລິຫານຄວາມສ່ຽງ;
3. ຂັ້ນສາມ: ພາກສ່ວນກວດສອບພາຍໃນ.

ພ້ອມນີ້, ກົງຈັກການບໍລິຫານຄວາມສ່ຽງດ້ານສະພາບຄ່ອງ ຕ້ອງປະກອບມີບຸກຄະລາກອນທີ່ມີຄຸນວຸດທິ ແລະ ປະສົບການທີ່ເໝາະສົມ ໃນຈຳນວນພຽງພໍ ແລະ ມີການຝຶກອົບຮົມກ່ຽວກັບການບໍລິຫານຄວາມສ່ຽງດ້ານສະພາບຄ່ອງໃຫ້ບຸກຄະລາກອນດັ່ງກ່າວ ຢ່າງໜ້ອຍ ສອງ ຄັ້ງ ຕໍ່ປີ.

ມາດຕາ 8 ຂະບວນການບໍລິຫານຄວາມສ່ຽງ

ທະນາຄານທຸລະກິດ ຕ້ອງມີຂະບວນການ ກຳນົດ, ວັດແທກ, ປະເມີນ, ຕິດຕາມ, ລາຍງານ ແລະ ຄວບຄຸມ ຫຼື ຫຼຸດຜ່ອນຄວາມສ່ຽງດ້ານສະພາບຄ່ອງທັງໝົດຂອງຕົນ ຢ່າງທັນເວລາ ໂດຍສອດຄ່ອງກັບສະພາບປັດຈຸບັນ ແລະ ຮັບປະກັນຄວາມສ່ຽງທີ່ຈະເກີດຂຶ້ນໃນຕໍ່ໜ້າ. ໃນນັ້ນ, ຕ້ອງມີວິທີການ ແລະ ຂັ້ນຕອນ ການຄາດຄະເນກະ

ແລະເງິນສົດ ທີ່ເກີດຈາກ ບັນດາຊັບສິນ, ໜີ້ສິນ ແລະ ລາຍການນອກໃບລາຍງານຖານະການເງິນ ສໍາລັບໄລຍະເວລາ ສາມສິບ (30) ວັນ ຕໍ່ໜ້າ.

ທະນາຄານທຸລະກິດ ຕ້ອງພິຈາລະນາຄວາມສໍາພັນກັນ ລະຫວ່າງ ຄວາມສ່ຽງດ້ານສະພາບຄ່ອງ ແລະ ຄວາມສ່ຽງດ້ານອື່ນ ພ້ອມທັງມີລະບົບເຕືອນໄພແຕ່ຫົວທີ ກ່ຽວກັບຄວາມສ່ຽງດ້ານສະພາບຄ່ອງ ແລະ ລະບົບຂໍ້ມູນການບໍລິການ ເພື່ອຕິດຕາມ ແລະ ລາຍງານ ກ່ຽວກັບຄວາມສ່ຽງດ້ານສະພາບຄ່ອງໃຫ້ພາກສ່ວນພາຍໃນທີ່ກ່ຽວຂ້ອງຂອງຕົນ ແລະ ທະນາຄານແຫ່ງ ສປປ ລາວ.

**ມາດຕາ 9 ການກໍານົດຄວາມສາມາດໃນການຮັບຄວາມສ່ຽງ**

ທະນາຄານທຸລະກິດ ຕ້ອງກໍານົດຄວາມສາມາດໃນການຮັບຄວາມສ່ຽງດ້ານສະພາບຄ່ອງຂອງຕົນ ໂດຍສອດຄ່ອງກັບຍຸດທະສາດການດໍາເນີນທຸລະກິດ, ຖານະການເງິນ, ຄວາມສາມາດໃນການລະດົມແຫຼ່ງທຶນ ແລະ ລະດັບຄວາມສໍາຄັນຂອງຕົນ ໃນລະບົບສະຖາບັນການເງິນ.

**ມາດຕາ 10 ການວາງແຜນດໍາເນີນທຸລະກິດ**

ໃນການວາງແຜນດໍາເນີນທຸລະກິດທີ່ສໍາຄັນ ທະນາຄານທຸລະກິດ ຕ້ອງພິຈາລະນາເຖິງຄວາມສ່ຽງດ້ານສະພາບຄ່ອງ ແລະ ຕົ້ນທຶນຂອງການບໍລິຫານຄວາມສ່ຽງ ທີ່ອາດຈະເກີດຂຶ້ນຕໍ່ການດໍາເນີນທຸລະກິດນັ້ນ ບໍ່ວ່າຈະກ່ຽວກັບຊັບສິນທີ່ຢູ່ໃນ ຫຼື ນອກໃບລາຍງານຖານະການເງິນ ເພື່ອໃຫ້ເໝາະສົມກັບຜົນຕອບແທນ ແລະ ຄວາມສ່ຽງ.

**ມາດຕາ 11 ການຕິດຕາມ ແລະ ຄວບຄຸມຄວາມສ່ຽງທົ່ວກຸ່ມ**

ທະນາຄານທຸລະກິດ ຕ້ອງຕິດຕາມ ແລະ ຄວບຄຸມຄວາມສ່ຽງດ້ານສະພາບຄ່ອງ ແລະ ຄວາມຕ້ອງການແຫຼ່ງທຶນ ຢູ່ພາຍໃນກຸ່ມ ແລະ ນິຕິບຸກຄົນ ທີ່ຂຶ້ນກັບຕົນ ລວມທັງສະກຸນເງິນທີ່ຕົນນໍາໃຊ້ ໂດຍຄໍານຶງເຖິງບັນດາອຸປະສັກ ທີ່ຈະມີຕໍ່ການໂອນທຶນໃຫ້ແກ່ກັນ ພາຍໃນກຸ່ມຂອງຕົນ.

**ມາດຕາ 12 ຍຸດທະສາດແຫຼ່ງທຶນແບບຫຼາກຫຼາຍ**

ທະນາຄານທຸລະກິດ ຕ້ອງສ້າງຍຸດທະສາດການສະໜອງທຶນທີ່ມີຄວາມຫຼາກຫຼາຍ ໂດຍມີການທົບທວນຢ່າງໜ້ອຍປີລະຄັ້ງ.

ທະນາຄານທຸລະກິດ ຕ້ອງຮັກສາຄວາມສໍາພັນທີ່ດີກັບຜູ້ທີ່ຈະເປັນແຫຼ່ງທຶນໃຫ້ຕົນ ເພື່ອຮັບປະກັນແຫຼ່ງທຶນທີ່ຈະນໍາມາແກ້ໄຂຄວາມສ່ຽງດ້ານສະພາບຄ່ອງ ພ້ອມທັງປະເມີນຄວາມສາມາດຂອງຕົນໃນການລະດົມທຶນໄດ້ໄວ ຈາກແຕ່ລະແຫຼ່ງທຶນ ຢ່າງເປັນປົກກະຕິ ແລະ ຕ້ອງກໍານົດບັນດາປັດໄຈ ທີ່ອາດຈະກະທົບຕໍ່ຄວາມສາມາດໃນການລະດົມທຶນ ແລະ ມີການຕິດຕາມບັນດາປັດໄຈເຫຼົ່ານັ້ນ ຢ່າງໃກ້ຊິດ.

**ມາດຕາ 13 ການບໍລິຫານຖານະສະພາບຄ່ອງພາຍໃນວັນ**

ທະນາຄານທຸລະກິດ ຕ້ອງບໍລິຫານຖານະສະພາບຄ່ອງພາຍໃນວັນ ແລະ ຄວາມສ່ຽງທີ່ຕິດພັນ ເພື່ອສາມາດປະຕິບັດພັນທະການຊໍາລະຂອງຕົນ ທັນຕາມກໍານົດເວລາ ທັງໃນສະພາບປົກກະຕິ ແລະ ພາວະວິກິດ.

ມາດຕາ 14 ການບໍລິຫານຫຼັກຊັບຄໍ້າປະກັນ

ທະນາຄານທຸລະກິດ ຕ້ອງບໍລິຫານບັນດາຫຼັກຊັບຄໍ້າປະກັນ ທີ່ສາມາດນໍາມາຄໍ້າປະກັນເງິນກູ້ ເພື່ອແກ້ໄຂສະພາບຄ່ອງຂອງຕົນນໍາທະນາຄານແຫ່ງ ສປປ ລາວ. ໃນນັ້ນ, ຕ້ອງແຍກລະຫວ່າງ ຊັບສິນທີ່ສາມາດນໍາມາຄໍ້າປະກັນໄດ້ ແລະ ຊັບສິນທີ່ບໍ່ສາມາດນໍາມາຄໍ້າປະກັນໄດ້ ພ້ອມທັງ ຕິດຕາມສະພາບ, ທີ່ຕັ້ງ ແລະ ວິທີການນໍາຊັບສິນດັ່ງກ່າວ.

ມາດຕາ 15 ການທົດສອບພາວະເຄັ່ງຕຶງ

ທະນາຄານທຸລະກິດ ຕ້ອງດໍາເນີນການທົດສອບພາວະເຄັ່ງຕຶງ ສໍາລັບໄລຍະສັ້ນ ແລະ ໄລຍະຍາວ ຢ່າງເປັນປະຈໍາ ໂດຍອີງໃສ່ຈຸດພິເສດຂອງຕົນ ແລະ ສະພາບຕະຫຼາດໂດຍລວມ ເພື່ອວັດແທກຄວາມສ່ຽງ, ຜົນກະທົບຕໍ່ສະພາບຄ່ອງ ແລະ ສາມາດລະບຸປັດໄຈ ທີ່ອາດຈະເຮັດໃຫ້ເກີດມີບັນຫາສະພາບຄ່ອງ ພ້ອມທັງຮັບປະກັນໃຫ້ຄວາມສ່ຽງປັດຈຸບັນຂອງຕົນ ສອດຄ່ອງກັບຄວາມສາມາດໃນການຮັບຄວາມສ່ຽງທີ່ສະພາບໍລິຫານໄດ້ຮັບຮອງ. ຜົນຂອງການທົດສອບ ຕ້ອງນໍາມາເປັນບ່ອນອີງໃນການປັບປຸງຍຸດທະສາດການບໍລິຫານຄວາມສ່ຽງດ້ານສະພາບຄ່ອງ ແລະ ການສ້າງແຜນການສະໜອງທຶນສຸກເສີນ.

ຂອບເຂດ ແລະ ຄວາມຖີ່ຂອງການທົດສອບ ຕ້ອງເໝາະສົມກັບຂະໜາດຂອງທະນາຄານທຸລະກິດ, ຄວາມສ່ຽງ ແລະ ລະດັບຄວາມສໍາຄັນຂອງທະນາຄານທຸລະກິດ ໃນລະບົບສະຖາບັນການເງິນ. ໃນນັ້ນ, ທະນາຄານແຫ່ງ ສປປ ລາວ ສາມາດກໍານົດໃຫ້ທະນາຄານທຸລະກິດ ເພີ່ມຄວາມຖີ່ ຫຼື ທົດສອບພາວະເຄັ່ງຕຶງໃນສະຖານະການຕ່າງໆເພີ່ມຕື່ມໄດ້.

ຜູ້ບໍລິຫານຂອງທະນາຄານທຸລະກິດ ຕ້ອງມີບົດບາດສໍາຄັນໃນຂະບວນການທົດສອບພາວະເຄັ່ງຕຶງ ໂດຍພິຈາລະນານໍາໃຊ້ເຫດການຈໍາລອງທີ່ມີລະດັບຄວາມຮຸນແຮງເຂົ້າໃນການທົດສອບດັ່ງກ່າວ.

ມາດຕາ 16 ການກໍານົດແຜນການສະໜອງທຶນສຸກເສີນ

ທະນາຄານທຸລະກິດ ຕ້ອງກໍານົດແຜນການສະໜອງທຶນສຸກເສີນ ເພື່ອນໍາໃຊ້ເຂົ້າໃນການແກ້ໄຂບັນຫາສະພາບຄ່ອງແບບສຸກເສີນ ຕາມການຮັບຮອງຂອງສະພາບໍລິຫານ ແລະ ມີການທົດສອບແຜນການດັ່ງກ່າວ ຢ່າງໜ້ອຍປີລະຄັ້ງ ເພື່ອຮັບປະກັນໃຫ້ແຜນການດັ່ງກ່າວ ຖືກນໍາໃຊ້ໄດ້ຢ່າງມີປະສິດທິຜົນ ກໍລະນີເກີດເຫດສຸກເສີນ.

ແຜນການສະໜອງທຶນສຸກເສີນ ຕ້ອງເໝາະສົມກັບ ຄວາມສະຫຼັບສັບຊ້ອນ, ລັກສະນະຄວາມສ່ຽງ, ຂອບເຂດການດໍາເນີນທຸລະກິດ ແລະ ຄວາມສໍາຄັນຂອງທະນາຄານທຸລະກິດ ໃນລະບົບສະຖາບັນການເງິນ. ແຜນການດັ່ງກ່າວ ຕ້ອງມີຄວາມຍືດຍຸ່ນໃນລະດັບສູງ ເພື່ອໃຫ້ທະນາຄານທຸລະກິດ ສາມາດນໍາໃຊ້ແກ້ໄຂກໍລະນີສຸກເສີນ ໄດ້ຢ່າງວ່ອງໄວ.

ແຜນການສະໜອງທຶນສຸກເສີນ ມີເນື້ອໃນສໍາຄັນ ດັ່ງນີ້:

1. ຍຸດທະສາດໃນການແກ້ໄຂການຂາດສະພາບຄ່ອງ ໃນກໍລະນີສຸກເສີນ;
2. ນະໂຍບາຍ ແລະ ຂັ້ນຕອນ ໃນການແກ້ໄຂພາວະວິກິດ ໃນລະດັບຕ່າງໆ;
3. ການແບ່ງຄວາມຮັບຜິດຊອບຂອງແຕ່ລະພາກສ່ວນຂອງທະນາຄານທຸລະກິດ ທີ່ມີບົດບາດໃນການຈັດຕັ້ງປະຕິບັດແຜນການດັ່ງກ່າວ;
4. ຂັ້ນຕອນການສື່ສານ, ການສະເໜີ ແລະ ພິຈາລະນາບັນຫາສະພາບຄ່ອງ ລະຫວ່າງກົງຈັກພາຍໃນຂອງທະນາຄານທຸລະກິດດ້ວຍກັນ ແລະ ລະຫວ່າງທະນາຄານທຸລະກິດ ກັບພາຍນອກ;

ມາດຕາ 17 **ການຮັກສາຊັບສິນສະພາບຄ່ອງ**

ທະນາຄານທຸລະກິດ ຕ້ອງຮັກສາຊັບສິນສະພາບຄ່ອງທີ່ມີຄຸນນະພາບສູງ ແລະ ບໍ່ມີພາລະຜູກພັນ ເພື່ອຮັບມືກັບບັນດາສະພາວະວິກິດດ້ານສະພາບຄ່ອງ ໂດຍບໍ່ມີຂໍ້ຈຳກັດດ້ານກົດໝາຍ ແລະ ລະບຽບການ ໃນການນຳໃຊ້ຊັບສິນດັ່ງກ່າວ ເພື່ອແກ້ໄຂສະພາບຄ່ອງ.

ຂະໜາດ ແລະ ໂຄງປະກອບຂອງຊັບສິນສະພາບຄ່ອງ ຕ້ອງສອດຄ່ອງກັບຄວາມສາມາດໃນການຮັບຄວາມສ່ຽງຂອງທະນາຄານທຸລະກິດ ແລະ ສອດຄ່ອງກັບການຮັກສາອັດຕາສ່ວນສະພາບຄ່ອງ ຕາມທີ່ໄດ້ກຳນົດໄວ້ໃນໝວດທີ 3 ຂອງຂໍ້ຕົກລົງສະບັບນີ້.

ມາດຕາ 18 **ການເປີດເຜີຍຂໍ້ມູນ**

ທະນາຄານທຸລະກິດ ຕ້ອງເປີດເຜີຍຂໍ້ມູນ ເພື່ອໃຫ້ຜູ້ທີ່ກ່ຽວຂ້ອງກັບການດຳເນີນທຸລະກິດຂອງຕົນ ມີຂໍ້ມູນພຽງພໍໃນການປະເມີນ ແລະ ການບໍລິຫານສະພາບຄ່ອງ ໃນແຕ່ລະໄລຍະ.

ຂໍ້ມູນຕົ້ນຕໍທີ່ທະນາຄານທຸລະກິດ ຕ້ອງເປີດເຜີຍ ມີດັ່ງນີ້:

1. ກົງຈັກ ແລະ ກອບການບໍລິຫານຄວາມສ່ຽງດ້ານສະພາບຄ່ອງຂອງຕົນ;
2. ຂໍ້ມູນດ້ານປະລິມານ ກ່ຽວກັບຖານະສະພາບຄ່ອງຂອງຕົນ ເປັນຕົ້ນ ຂະໜາດ ແລະ ໂຄງປະກອບຂອງຊັບສິນສະພາບຄ່ອງ;
3. ຄວາມສ່ຽງດ້ານສະພາບຄ່ອງ ແລະ ມາດຕະການຮັບມືກັບຄວາມສ່ຽງດັ່ງກ່າວ;
4. ຂໍ້ມູນອື່ນ ຕາມການກຳນົດຂອງກົມຄຸ້ມຄອງທະນາຄານທຸລະກິດ.

ມາດຕາ 19 **ຄູ່ມືບໍລິຫານຄວາມສ່ຽງດ້ານສະພາບຄ່ອງ**

ທະນາຄານທຸລະກິດ ຕ້ອງມີຄູ່ມືບໍລິຫານຄວາມສ່ຽງດ້ານສະພາບຄ່ອງ ເພື່ອຮັບປະກັນຄວາມເປັນເອກະພາບ ແລະ ປະສິດທິຜົນຂອງການບໍລິຫານຄວາມສ່ຽງດ້ານສະພາບຄ່ອງ ຊຶ່ງເຊັນໂດຍຜູ້ອຳນວຍການ ແລະ ຮັບຮອງໂດຍສະພາບໍລິຫານ.

ການສ້າງຄູ່ມື ຕ້ອງສອດຄ່ອງກັບແຜນຍຸດທະສາດ, ນະໂຍບາຍ ແລະ ແຜນການບໍລິຫານຄວາມສ່ຽງດ້ານສະພາບຄ່ອງ ຂອງທະນາຄານທຸລະກິດ.

ເນື້ອໃນຄູ່ມື ຕ້ອງກຳນົດກອບການບໍລິຫານຄວາມສ່ຽງດ້ານສະພາບຄ່ອງ, ຂັ້ນຕອນ ແລະ ວິທີການ ລວມທັງພາລະບົດບາດ, ສິດ ແລະ ໜ້າທີ່ ຂອງແຕ່ລະພາກສ່ວນ ໃນການບໍລິຫານຄວາມສ່ຽງດ້ານສະພາບຄ່ອງຢ່າງລະອຽດ.

ທະນາຄານທຸລະກິດ ຕ້ອງເຜີຍແຜ່ ແລະ ຝຶກອົບຮົມກ່ຽວກັບຄູ່ມື ໃຫ້ຜູ້ບໍລິຫານ ແລະ ບຸກຄະລາກອນທີ່ກ່ຽວຂ້ອງ ຢ່າງເປັນປະຈຳ ເພື່ອໃຫ້ເຂົ້າໃຈ, ຈັດຕັ້ງປະຕິບັດໃຫ້ສອດຄ່ອງ ແລະ ເປັນເອກະພາບ ພ້ອມທັງຕິດຕາມກວດກາການຈັດຕັ້ງປະຕິບັດ ແລະ ທົບທວນຄືນ ຢ່າງໜ້ອຍປີລະຄັ້ງ ເພື່ອປັບປຸງໃຫ້ສອດຄ່ອງກັບຂີດຄວາມສາມາດໃນການຮັບມື, ລັກສະນະຂອງຄວາມສ່ຽງ, ລະດັບຄວາມສຳຄັນຂອງທະນາຄານທຸລະກິດ, ເງື່ອນໄຂຂອງຕະຫຼາດ ແລະ ເສດຖະກິດມະຫາພາກ ໃນແຕ່ລະໄລຍະ.

ທະນາຄານທຸລະກິດ ຕ້ອງປັບປຸງ ຫຼື ສ້າງ ຄູ່ມືບໍລິຫານຄວາມສ່ຽງດ້ານສະພາບຄ່ອງຂອງຕົນ ໃຫ້ສຳເລັດພາຍໃນປີ 2024 ແລະ ນຳສົ່ງສະບັບສຳເນົາໃຫ້ກົມຄຸ້ມຄອງທະນາຄານທຸລະກິດ ພາຍໃນເວລາ ຫ້າ (5) ວັນລັດຖະການ ພາຍຫຼັງຄູ່ມືໄດ້ຖືກຮັບຮອງເອົາໂດຍສະພາບໍລິຫານ.

# ໝວດທີ 3
# ການຮັກສາອັດຕາສ່ວນສະພາບຄ່ອງ

### ມາດຕາ 20 ການຮັກສາອັດຕາສ່ວນສະພາບຄ່ອງ

ທະນາຄານທຸລະກິດ ຕ້ອງຮັກສາອັດຕາສ່ວນສະພາບຄ່ອງ (Liquidity Coverage Ratio = LCR) ຕະຫຼອດເວລາ ໂດຍຮັບປະກັນໃຫ້ມີຊັບສິນສະພາບຄ່ອງໃນລະດັບທີ່ພຽງພໍ ເພື່ອຕອບສະໜອງຄວາມຕ້ອງການດ້ານສະພາບຄ່ອງຂອງຕົນ ສໍາລັບໄລຍະເວລາ ສາມສິບ (30) ວັນ ຕໍ່ໜ້າ.

ສູດຄິດໄລ່ອັດຕາສ່ວນສະພາບຄ່ອງ ມີ ດັ່ງນີ້:

$$\text{ອັດຕາສ່ວນສະພາບຄ່ອງ} = \frac{\text{ຜົນລວມຊັບສິນສະພາບຄ່ອງ}}{\text{ກະແສເງິນສົດໄຫຼອອກສຸດທິໃນ ສາມສິບ ວັນຕໍ່ໜ້າ}} \geq 100\%$$

### ມາດຕາ 21 ຊັບສິນສະພາບຄ່ອງ

ຊັບສິນສະພາບຄ່ອງ (High Quality Liquid Assets = HQLA) ແມ່ນຜົນບວກລວມຂອງລາຍການຊັບສິນທັງໝົດ ດັ່ງນີ້:

1. ເງິນສົດທຸກສະກຸນ ທີ່ທະນາຄານທຸລະກິດມີໃນຄັງຂອງຕົນ;
2. ເງິນຝາກທຸກສະກຸນ ທີ່ທະນາຄານທຸລະກິດມີໄວ້ນໍາທະນາຄານແຫ່ງ ສປປ ລາວ;
3. ພັນທະບັດຂອງລັດຖະບານແຫ່ງ ສປປ ລາວ;
4. ພັນທະບັດຂອງລັດຖະບານຕ່າງປະເທດ ຫຼື ສະຖາບັນການເງິນສາກົນ ທີ່ມີຄວາມສ່ຽງເທົ່າສູນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບການກ່ຽວກັບຄວາມພຽງພໍຂອງທຶນ ທີ່ທະນາຄານແຫ່ງ ສປປ ລາວ ວາງອອກ ໃນແຕ່ລະໄລຍະ;
5. ຊັບສິນອື່ນທີ່ມີຄວາມສ່ຽງຕໍ່າ ແລະ ສາມາດຫັນເປັນເງິນສົດໄດ້ໄວ ໂດຍສະເພາະໃນພາວະວິກິດ.

ກົມຄຸ້ມຄອງທະນາຄານທຸລະກິດ ເປັນຜູ້ກໍານົດລະບຽບການ ແລະ ວິທີການຄິດໄລ່ຊັບສິນສະພາບຄ່ອງ.

### ມາດຕາ 22 ກະແສເງິນສົດໄຫຼອອກສຸດທິ

ກະແສເງິນສົດໄຫຼອອກສຸດທິ (Net Cash Outflows) ແມ່ນສ່ວນຜິດດ່ຽງ ຫຼື ຜົນລົບລະຫວ່າງ ກະແສເງິນສົດທີ່ຄາດວ່າຈະໄຫຼອອກທັງໝົດ ແລະ ກະແສເງິນສົດທີ່ຄາດຈະໄຫຼເຂົ້າທັງໝົດ ໃນໄລຍະເວລາ ສາມສິບ (30) ວັນ ຕໍ່ໜ້າ. ໃນນັ້ນ, ຈໍານວນກະແສເງິນສົດທີ່ຄາດວ່າຈະໄຫຼເຂົ້າທັງໝົດ ສາມາດນໍາມາລົບໄດ້ ບໍ່ເກີນ ເກົ້າສິບສ່ວນຮ້ອຍ (90%) ຂອງກະແສເງິນສົດທີ່ຄາດຈະໄຫຼອອກທັງໝົດ.

ກົມຄຸ້ມຄອງທະນາຄານທຸລະກິດ ເປັນຜູ້ກໍານົດລະບຽບການ ແລະ ວິທີການຄິດໄລ່ກະແສເງິນສົດໄຫຼອອກສຸດທິ.

ມາດຕາ 23 ການຈັດຕັ້ງປະຕິບັດອັດຕາສ່ວນສະພາບຄ່ອງ

ທະນາຄານທຸລະກິດ ຕ້ອງຈັດຕັ້ງປະຕິບັດການຮັກສາອັດຕາສ່ວນສະພາບຄ່ອງ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 20 ຂອງຂໍ້ຕົກລົງສະບັບນີ້ ຕາມເຈັດ (7) ໄລຍະ ດັ່ງນີ້:

1. ວັນທີ່ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ຫາ ວັນທີ 30 ກັນຍາ 2024: ເປັນໄລຍະກະກຽມຄວາມພ້ອມ;

2. ວັນທີ 1 ຕຸລາ 2024 ຫາ ວັນທີ 31 ທັນວາ 2024: ຮັກສາອັດຕາສ່ວນສະພາບຄ່ອງ ຢ່າງໜ້ອຍ ຫ້າສິບສ່ວນຮ້ອຍ (50%);

3. ວັນທີ 1 ມັງກອນ 2025 ຫາ ວັນທີ 31 ທັນວາ 2025: ຮັກສາອັດຕາສ່ວນສະພາບຄ່ອງ ຢ່າງໜ້ອຍ ຫົກສິບສ່ວນຮ້ອຍ (60%);

4. ວັນທີ 1 ມັງກອນ 2026 ຫາ ວັນທີ 31 ທັນວາ 2026: ຮັກສາອັດຕາສ່ວນສະພາບຄ່ອງ ຢ່າງໜ້ອຍ ເຈັດສິບສ່ວນຮ້ອຍ (70%);

5. ວັນທີ 1 ມັງກອນ 2027 ຫາ ວັນທີ 31 ທັນວາ 2027: ຮັກສາອັດຕາສ່ວນສະພາບຄ່ອງ ຢ່າງໜ້ອຍ ແປດສິບສ່ວນຮ້ອຍ (80%);

6. ວັນທີ 1 ມັງກອນ 2028 ຫາ ວັນທີ 31 ທັນວາ 2028: ຮັກສາອັດຕາສ່ວນສະພາບຄ່ອງ ຢ່າງໜ້ອຍ ເກົ້າສິບສ່ວນຮ້ອຍ (90%);

7. ວັນທີ 1 ມັງກອນ 2029 ເປັນຕົ້ນໄປ: ຮັກສາອັດຕາສ່ວນສະພາບຄ່ອງ ຢ່າງໜ້ອຍ ຮ້ອຍສ່ວນຮ້ອຍ (100%).

## ໝວດທີ 4
## ການລາຍງານ, ການປະເມີນ ແລະ ການກວດກາ

ມາດຕາ 24 ການລາຍງານ

ທະນາຄານທຸລະກິດ ຕ້ອງລາຍງານກ່ຽວກັບການຮັກສາອັດຕາສ່ວນສະພາບຄ່ອງຂອງຕົນ ໃຫ້ກົມຄຸ້ມຄອງທະນາຄານທຸລະກິດ ກ່ອນເວລາ 9:00 ໂມງ ຂອງວັນສຸກ ໃນແຕ່ລະອາທິດ ຫຼື ວັນລັດຖະການຕໍ່ມາ (ກໍລະນີວັນສຸກ ເປັນວັນພັກທາງລັດຖະການ) ໂດຍປະຕິບັດຕາມແບບພິມ ແລະ ຊ່ອງທາງການລາຍງານ ທີ່ກົມຄຸ້ມຄອງທະນາຄານທຸລະກິດ ກຳນົດ.

ມາດຕາ 25 ການປະເມີນ

ກົມຄຸ້ມຄອງທະນາຄານທຸລະກິດ ຕ້ອງປະເມີນກອບການບໍລິຫານຄວາມສ່ຽງດ້ານສະພາບຄ່ອງ ຂອງທະນາຄານທຸລະກິດ ຢ່າງລະອຽດຮອບດ້ານ ໂດຍອີງໃສ່ຄວາມສຳຄັນຂອງທະນາຄານທຸລະກິດ ໃນລະບົບສະຖາບັນການເງິນ ເພື່ອຮັບປະກັນວ່າກອບດັ່ງກ່າວ ມີຄວາມເຂັ້ມແຂງ ແລະ ພຽງພໍ ໃນການຮັບມືກັບວິກິດດ້ານສະພາບຄ່ອງທີ່ອາດຈະເກີດຂຶ້ນ.

ກໍລະນີ ມີຂໍ້ບົກພ່ອງໃດໜຶ່ງໃນກອບການບໍລິຫານຄວາມສ່ຽງດ້ານສະພາບຄ່ອງ ກົມຄຸ້ມຄອງທະນາຄານ

ທຸລະກິດ ຕ້ອງແຈ້ງໃຫ້ທະນາຄານທຸລະກິດ ແກ້ໄຂໂດຍໄວ ດ້ວຍການນໍາໃຊ້ມາດຕະການແຕ່ທີ່ອທີ ຕາມທີ່ໄດ້ກໍານົດໄວ້ໃນລະບຽບການຂອງທະນາຄານແຫ່ງ ສປປ ລາວ.

ມາດຕາ 26 ການກວດກາ

ກົມຄຸ້ມຄອງທະນາຄານທຸລະກິດ ຕ້ອງກວດກາຂໍ້ມູນດ້ານອື່ນຂອງທະນາຄານທຸລະກິດ ເພື່ອປະກອບໃສ່ການປະເມີນກອບການບໍລິຫານຄວາມສ່ຽງດ້ານສະພາບຄ່ອງຂອງທະນາຄານທຸລະກິດດັ່ງກ່າວ ດັ່ງນີ້:

1. ອາຍຸສັນຍາ;
2. ຈຸດສຸມຂອງການສະໜອງທຶນ;
3. ຊັບສິນທີ່ບໍ່ມີພາລະຜູກພັນ ທີ່ທະນາຄານທຸລະກິດມີຢູ່;
4. ການຮັກສາອັດຕາສ່ວນສະພາບຄ່ອງ ຕາມສະກຸນເງິນທີ່ສໍາຄັນ;
5. ບົດລາຍງານການກວດສອບພາຍໃນ;
6. ບົດລາຍງານດ້ານຄວາມໝັ້ນຄົງ;
7. ຂໍ້ມູນອື່ນ ທີ່ເຫັນວ່າເປັນປະໂຫຍດໃຫ້ແກ່ການປະເມີນ.

ມາດຕາ 27 ການປະສານສົມທົບ

ກົມຄຸ້ມຄອງທະນາຄານທຸລະກິດ ຕ້ອງປະສານສົມທົບກັບອົງການຄຸ້ມຄອງອື່ນຂອງລັດ ທັງພາຍໃນ ແລະ ຕ່າງປະເທດ ເພື່ອອໍານວຍຄວາມສະດວກໃຫ້ແກ່ການຮ່ວມມື ແລະ ການຄຸ້ມຄອງການບໍລິຫານຄວາມສ່ຽງດ້ານສະພາບຄ່ອງ. ການປະສານສົມທົບດັ່ງກ່າວ ຕ້ອງດໍາເນີນເປັນລະບົບ ແລະ ຕໍ່ເນື່ອງ ເພື່ອຮັບປະກັນປະສິດທິຜົນໃນການຄຸ້ມຄອງການບໍລິຫານຄວາມສ່ຽງດ້ານສະພາບຄ່ອງ ທັງໃນສະພາບປົກກະຕິ ແລະ ພາວະວິກິດ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

ມາດຕາ 28 ການຈັດຕັ້ງປະຕິບັດ

ມອບໃຫ້ກົມຄຸ້ມຄອງທະນາຄານທຸລະກິດ ເປັນຜູ້ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.

ທະນາຄານທຸລະກິດ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 29 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງວ່າດ້ວຍການຮັກສາອັດຕາສ່ວນເງິນສົດຄ້າງລັງຂອງທະນາຄານທຸລະກິດ ສະບັບເລກທີ 761/ທຫລ ລົງວັນທີ 3 ກັນຍາ 2013.

ຂໍ້ກໍານົດ, ບົດບັນຍັດໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ບຸນເຫຼືອ ສິນໄຊວໍຣະວົງ